ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ 221 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2023

# ແຈ້ງການ

## ຈໍາໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 3 ໃຫ້ແກ່ມວນຊົນ

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອເປັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ບົນພື້ນຖານໃຫ້ບັນລຸໄດ້ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍ່ຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ດ້ວຍການສືບຕໍ່ອອກຈໍາໜ່າຍພັນທະບັດ ທຫລ ສະກຸນເງິນກີບ ງວດທີ 3 ໃຫ້ແກ່ມວນຊົນ, ດັ່ງລາຍລະອຽດລຸ່ມນີ້:

1. **ຄຸນລັກສະນະພັນທະບັດ ທຫລ ສະກຸນເງິນກີບ ງວດທີ 3**
   - **ພັນທະບັດທີ່ອອກຈໍາໜ່າຍ:** ມູນຄ່າທັງໝົດ 3.000.000.000.000 ກີບ (ສາມພັນຕື້ກີບ), ອາຍຸພັນທະບັດ 6 ເດືອນ, ອັດຕາດອກເບ້ຍ 15% ຕໍ່ປີ, ຊໍາລະດອກເບ້ຍຄັ້ງດຽວເມື່ອຄົບກໍານົດໄຖ່ຖອນ, ບໍ່ສາມາດປ່ຽນມືໄດ້, ວົງເງິນສັ່ງຈອງຕໍ່າສຸດ 100.000 ກີບ (ໜຶ່ງແສນກີບ) ແລະ ສູງສຸດບໍ່ເກີນ 1.000.000.000 ກີບ (ໜຶ່ງຕື້ກີບ) ຕໍ່ລາຍ ສໍາລັບບຸກຄົນ ແລະ ນິຕິບຸກຄົນ;
   - **ຮູບແບບພັນທະບັດ:** ພັນທະບັດຮູບແບບເອເລັກໂຕຣນິກ ບໍ່ມີໃບພັນທະບັດເປັນເຈ້ຍ ແຕ່ຈະມີການອອກໜັງສືຢັ້ງຢືນການຖືຄອງພັນທະບັດໃຫ້ແກ່ເຈົ້າຂອງພັນທະບັດ.

2. **ເງື່ອນໄຂຂອງຜູ້ທີ່ສາມາດຊື້ພັນທະບັດ:** ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຖິ່ນຖານຢູ່ ສປປ ລາວ ຍົກເວັ້ນທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ.

3. **ການສັ່ງຈອງພັນທະບັດ**

ຜູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ມີຄວາມສົນໃຈຊື້ພັນທະບັດ ທຫລ ສະກຸນເງິນກີບ ແມ່ນສາມາດສັ່ງຈອງ **ໃນລະຫວ່າງວັນທີ 06-08 ກັນຍາ 2023** ຜ່ານການສັ່ງຈອງກັບທະນາຄານທຸລະກິດ ທີ່ເປັນຕົວແທນຈໍາໜ່າຍ 7 ແຫ່ງ, ດັ່ງລາຍຊື່ລຸ່ມນີ້:

1. ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL);
2. ທະນາຄານ ພັດທະນາລາວ ຈໍາກັດ (LDB);
3. ທະນາຄານ ສົ່ງເສີມກະສິກໍາ ຈໍາກັດ (APB);
4. ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈໍາກັດ (LVB);



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

5. ທະນາຄານ ຮ່ວມພັດທະນາ (JDB);
6. ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC) ແລະ
7. ທະນາຄານ ບີໄອຊີ ລາວ ຈຳກັດ (BIC).

**4. ການຈັດສັນພັນທະບັດ**

ເນື່ອງຈາກວ່າພັນທະບັດທະນາຄານແຫ່ງ ສປປ ລາວ ທີ່ອອກໃນງວດນີ້ ມີຈຳນວນຈຳກັດ, ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ຈັດສັນຕາມມູນຄ່າຈຳໜ່າຍຕົວຈິງ ແລະ ມູນຄ່າການສັ່ງຈອງທັງໝົດ ໃຫ້ຜູ້ສັ່ງຈອງຕາມລາຍຊື່ທີ່ສັ່ງຈອງກັບທະນາຄານຕົວແທນຈຳໜ່າຍ ເພື່ອຄວາມເປັນເອກະພາບກັນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຂໍເຊີນຊວນຜູ້ທີ່ມີຄວາມສົນໃຈຊື້ພັນທະບັດ ທຫລ ສະກຸນເງິນກີບ ງວດທີ 3 ສາມາດເຂົ້າໄປພົວພັນກັບທະນາຄານທຸລະກິດທີ່ເປັນຕົວແທນຈຳໜ່າຍ ນັບແຕ່ວັນທີອອກຈຳໜ່າຍເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ນ້ອຍຄຳພັນ ສໍປະເສີດ

ປະຊາສຳພັນ: ຫ້ອງການທະນາຄານແຫ່ງ ສປປ ລາວ

ໂທລະສັບ: 020-29555521 ແລະ 020-23654449